ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ທະນາຄານແຫ່ງ ສປປ ລາວ ໄດ້ຈັດຝຶກອົບຮົມຄວາມຮູ້ກ່ຽວກັບມາດຕະຖານ IFRS ແລະ ວຽກງານບັນຊີຂອງສະຖາບັນການເງິນ




ໃນວັນທີ 11-15 ກັນຍາ 2023 ທະນາຄານແຫ່ງ ສປປ ລາວ ໄດ້ຈັດຝຶກອົບຮົມຄວາມຮູ້ກ່ຽວກັບມາດຕະຖານ IFRS ແລະ ວຽກງານບັນຊີຂອງສະຖາບັນການເງິນ ທີ່ສະຖາບັນການທະນາຄານຂຶ້ນ ໂດຍການເປັນປະທານ ຂອງທ່ານ ນ. ນະຄອນສີ ມະໂນທັມ ຫົວໜ້າກົມບັນຊີ ແລະ ການເງິນ ມີຜູ້ເຂົ້າຮ່ວມຈາກບັນດາກົມພາຍໃນ ທຫລ, ຄະນະອຳນວຍການສະຖາບັນການເງິນ, ຄະນະພະແນກ ແລະ ວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ຈຸດປະສົງກໍ່ເພື່ອເຜີຍແຜ່ແຈ້ງການ ການຈັດຕັ້ງປະຕິບັດ IFRS ສຳລັບສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ແລະ ຝຶກອົບຮົມຄວາມຮູ້ພື້ນຖານກ່ຽວກັບມາດຕະຖານສາກົນທີ່ຕິດພັນກັບສະຖາບັນການເງິນລວມທັງການສ້າງບົດວິເຄາະຊ່ອງຫວ່າງ ແລະ ແຜນການຈັດຕັ້ງປະຕິບັດ IFRS ຂອງສະຖາບັນການເງິນ. ການຝຶກອົບຮົມມາດຕະຖານສາກົນດ້ານການລາຍງານການເງິນ IFRS ເປັນວຽກງານໜຶ່ງທີ່ມີຄວາມສຳຄັນໃນການຮັກສາສະຖຽນລະພາບທາງດ້ານການເງິນ ໂດຍສະເພາະແມ່ນ ການຄຸ້ມຄອງຄວາມໝັ້ນຄົງ ແລະ ການບໍລິຫານທຸລະກິດຂອງສະຖາບັນການເງິນ ທີ່ບໍ່ແມ່ນທະນາຄານ ແລະ ກົດໝາຍວ່າດ້ວຍການບັນຊີ (ສະບັບປັບປຸງ) ມາດຕາ 14, ສະບັບເລກທີ 47/ສພຊ, ລົງວັນທີ 26 ທັນວາ 2013 ທີ່ກຳນົດໃຫ້ວິສາຫະກິດຮັບໃຊ້ຜົນປະໂຫຍດສາທາລະນະ (PIE) ຊຶ່ງລວມມີທະນາຄານ ແລະ ສະຖາບັນການເງິນອື່ນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ ປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS). ຊຶ່ງໄດ້ຈັດຕັ້ງປະຕິບັດມາດຕະຖານດັ່ງກ່າວ ເມື່ອທຽບກັບສະພາບຄວາມເປັນຈິງທາງດ້ານເງື່ອນໄຂຄວາມພ້ອມຂອງສະຖາບັນການເງິນ ທີ່ບໍ່ແມ່ນທະນາຄານ ແມ່ນຍັງມີຄວາມທ້າທາຍຫຼາຍປະການໂດຍສະເພາະ ຄວາມຮູ້ຄວາມສາມາດຂອງບຸກຄະລາກອນໃນການຄຸ້ມຄອງກໍຄືການຈັດ

ຕັ້ງປະຕິບັດຕົວຈິງຍັງຈຳກັດ, ລະບົບຂໍ້ມູນຂ່າວສານຍັງບໍ່ທັນສາມາດຮອງຮັບ ແລະ ຜົນກະທົບທີ່ຈະມີຕໍ່ຖານະການເງິນໃນໄລຍະຂ້າມຜ່ານ. ທັງນີ້ ເພື່ອກະກຽມຄວາມພ້ອມໃນການຈັດຕັ້ງປະຕິບັດ IFRS ຂອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ, ທະນາຄານແຫ່ງ ສປປ ລາວ ໄດ້ອອກແຈ້ງການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ IFRS ສຳລັບສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ເຂົ້າເງື່ອນໄຂເປັນວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ (PIEs) ຕ້ອງໄດ້ກະກຽມຈັດຕັ້ງປະຕິບັດມາດຕະຖານສາກົນ IFRS ໃນປີ 2031. ດັ່ງນັ້ນ, ເພື່ອເປັນການສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນຂອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ເປັນ PIEs ເພື່ອກະກຽມຈັດຕັ້ງປະຕິບັດມາດຕະຖານສາກົນ IFRS ດັ່ງກ່າວ.




ໃນຕອນທ້າຍທ່ານປະທານ ກໍ່ໄດ້ເນັ້ນໜັກໃຫ້ຜູ້ເຂົ້າຮ່ວມເຊີດຊູຄວາມຮັບຜິດຊອບ, ຕັ້ງໃຈຮັບຟັງການບັນຍາຍ, ແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ເພື່ອໄປໝູນໃຊ້ເຂົ້າໃນວຽກງານຕົວຈິງໃຫ້ໄດ້ຮັບປະສິດທິຜົນສູງ ພ້ອມທັງ ສຸມສະຕິປັນຍາໃນການຄົ້ນຄວ້າປະກອບຄຳເຫັນໃຫ້ເລິກເຊິ່ງ ເພື່ອເຮັດໃຫ້ການຝຶກອົບຮົມໃນຄັ້ງນີ້ມີຜົນສຳເລັດດ້ວຍບັນຍາກາດທີ່ຟົດຟື້ນ ແລະ ມີປະສິດທິຜົນດີມີຕາມລະດັບຄາດໝາຍທີ່ວາງໄວ້.

ຂ່າວ-ພາບ: ແຝງສຸລິ ທຳມະວົງ + ແຂກ ມູນລະໄມ

*ເສດຖະກິດຈະເຂັ້ມແຂງ ຖ້າເຮົາຮ່ວມໃຈໃຊ້ເງິນກີບ*